**ແຜນການສອນ**
**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດ ທີ 14 ມີນາ 2009 (03-14-2010)**

## ເມື່ອມີການຜິດສິນທັມເຂົ້າມາໃນຄຣິສຕະຈັກ

**ຂໍ້ພຣະຄັມພີໃນບົດຮຽນ:** (1 ໂກຣິນໂທ 5:1-5, 9-13; 6:15-20)

**ເປົ້າໝາຍຂອງບົດຮຽນ:**
ບົດຮຽນນີ້ແມ່ນກ່ຽວກັບຂໍ້ກຳນົດຂອງພຣະເຈົ້າ__ ບໍ່ເໜືອກວ່າມາດຕະຖານຂອງວັທນະທັມ__ ຈາກພື້ນຖານຫລັກຄວາມເຊື່ອ ຈຳເພາະສິນທັມຂອງຄຣິສຕຽນ. ຄຣິສຕະຈັກຕ້ອງຍົກສູງມາດຕະຖານຂໍ້ບັນຍັດຂອງພຣະເຈົ້າ.

**ຄວາມສຳຄັນຂອງບົດຮຽນ:**
ພວກເຮົາດຳຣົງຊີວິດຢູ່ໃນສັງຄົມທີ່ເຕັມໄປດ້ວຍການບິດເບືອນຄວາມຈິງ ແລະປະກອບດ້ວຍການຜິດສິນທັມທາງເພດ. ຄຣິສຕຽນຫລາຍທ່ານມີຄວາມຮູ້ສຶກເມີນເສີຍຕໍ່ການຜິດສິນທັມ ກ່ຽວກັບການເຮັດຜິດຊາຍ-ຍິງ ທີ່ປາກົດມີຂື້ນຢູ່ທົ່ວໄປ ໂດຍຄິດວ່າມັນບໍ່ມີສ່ວນກ່ຽວຂ້ອງກັບຄວາມເຊື່ອຂອງເຂົາ ຊໍ້າບໍ່ພໍ ຍັງປ່ອຍປະລະເລີຍໃຫ້ສິ່ງເຫລົ່ານີ້ເກີດຂື້ນໃນຊີວິດດ້ວຍ. ພຣະເຈົ້າມີຂໍ້ມາດຕະຖານອັນດຽວ ຂອງການຮ່ວມເພດສັມພັນທີ່ຖືກຕ້ອງທີ່ສຸດ__ການຮ່ວມເພດສັມພັນມີຂອບເຂດຈຳກັດສະເພາະການຕ່ງງານຣະຫວ່າງສາມີ ແລະພັລຍາຂອງໃຜລາວ. ຄຣິສຕະຈັກສົມຄວນຍຶດຖືບັນຍັດຂໍ້ນີ້.

**ຜົນສະທ້ອນຕໍ່ຊີວິດ:**
ບົດຮຽນນີ້ສາມາດຊ່ອຍທ່ານໃຫ້ທ່ານພິຈາຣະນາເບິ່ງວິທີທາງທີ່ຊັກນຳທ່ານໃຫ້ຕົກໄປຢູ່ໃນຄວາມບາບ ຂອງການຮ່ວມເພດທີ່ຜິດສິນທັມຊຶ່ງຄອບງຳທ່ານທາງດ້ານຮີດຄອງປະເພນີ ແລະວິທີທາງທີ່ທ່ານຈະປົກປ້ອງດ້ວຍການຍຶດຖືຫລັກຄຸນນະທັມຂອງທ່ານ ແລະການໃຫ້ກຽດຊື່ສຽງ ກຽດສັກສີຂອງຄຣິສຕະຈັກຂອງທ່ານ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**
1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:**
ບອກໃຫ້ນັກຮຽນຮູ້ເຣື່ອງບົດຮຽນອາທິດນີ້ ແລະອາທິດທີ່ຜ່ານມາ. ເພື່ອເປັນການສະແດງເຖິງ ການທີ່ຄຣິສ

ຕະຈັກໄປໃນທາງທີ່ຜິດ ໃນເມື່ອມັນເປັນການຂັດຕໍ່ມາດຕະຖານຂອງໂລກ. ມາດຕະຖານຂອງເພດສັມພັນຂອງພຣະເຈົ້າປັສຈາກມົນທິນ.

ໃນຄວາມຄິດເຫັນຂອງທ່ານ, ໃນຄຣິສຕະຈັກສ່ວນຫລາຍໄດ້ຢູ່ໃນຄວາມເຂັ້ມແຂງ ຫລືຢູ່ໃນຖ້ຳຂອງຄວາມກົດດັນ?

ບົດຮຽນນີ້ແມ່ນເຣື່ອງຂອງຄຣິສຕະຈັກຕ້ອງມີສ່ວນແກ້ໄຂເຣື່ອງທີ່ໜ້າອັບອາຍ ເຣື່ອງຈະຣິຍະທັມຂອງສະມາຊິກໃນຄຣິສຕະຈັກ.

**1.<u>ຄວາມບາບຍັງເປັນທີ່ສະດຸດໃຈຂອງພວກເຮົາຢູ່ບໍ່?:</u>** (1 ໂກຣິນໂທ 5:1-2)

ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 5:1-2.

- ເປັນດ້ວຍເຫດໃດ ຄວາມພັນສັມພັນທາງເພດຊຶ່ງເປັນຄວາມບາບຈຶ່ງເຮັດໃຫ້ຄຣິສຕຽນຊາວໂກຣິນໂທເສື່ອມເສັຽຄຸນຄ່າການເປັນຄຣິສຕຽນ?
- ຈະເຮັດແນວໃດພວກເຮົາຈຶ່ງເຮັດໃຫ້ຄວາມຜິດບາບຢ່າງນີ້ລຶດນ້ອຍລົງໄດ້?
- ໃນການດຳຣົງຊີວິດຢູ່ໃນສັງຄົມ ຮີດຄອງປະເພນີໄດ້ເຮັດໃຫ້ພວກເຮົາຍອມຮັບຄວາມບໍ່ເປັນສິນທັມນັ້ນບໍ່?
- ແມ່ນຫຍັງທີ່ເຮັດໃຫ້ຄຣິສຕະຈັກເມືອງໂກຣິນໂທມີຄວາມສະເທືອນ ກະທົບກະແທກ?
- ເຮັດແນວໃດພວກເຮົາຈຶ່ງຈະສາມາດນຳເອົາປະຣິມານຈາກການແຊກນັ້ນກັບມາໄດ້?
- ພວກເຮົາຕ້ອງເຮັດທຸກຢ່າງເພື່ອໃຫ້ພໍພຣະທັຍຂອງພຣະເຈົ້າ, ບໍ່ແມ່ນຕາມທາງຝ່າຍໂລກ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ໂກຣິນໂທ 5:1-2)

1. ແມ່ນຫຍັງທີ່ເປັນທັສນະນິສັຍຂອງຄຣິສຕຽນໃນຄຣິສຕະຈັກເມືອງໂກຣິນໂທຕົກຢູ່ໃນຄວາມຜິດບາບ?
2. ທ່ານໄດ້ເຫັນຄວາມບໍ່ມີສິນທັມຄ່ອຍໆເສື່ອມເຂົ້າມາໃນວັທນະທັມ-ໃນຄຣິສຕະຈັກຂອງພວກເຮົາໃນລະຍະ 10 ປີທີ່ຜ່ານມາແນວໃດ? ພວກເຮົາຄວນຈະເຮັດແນວໃດໃນ 10 ປີ ຂ້າງໜ້າ?
3. ມັນຈະເປັນໄປໄດ້ບໍ່ທີ່ຈະບໍ່ໃຫ້ຄວາຜິດບາບເກົ່າແກ່ເຂົ້າມາເຮັດໃຫ້ພວກເຮົາສະດຸດໃຈອີກຕໍ່ໄປ?
4. ຄຣິສຕະຈັກຂອງພວກເຮົາຄວນຈະເວົ້າ ແລະຈັດການກັບເຣື່ອງເພດພັນສັມພັນທີ່ຜິດສິນທັມນີ້ແນວໃດ?

**2.<u>ພວກເຮົາຄວນຕອບຮັບສະມາຊິກທີ່ຫລົ້ມຊູ້ຢ່າງໃດ?:</u>** (1 ໂກຣິນໂທ 5:9-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 5:9-13
- ເຫດຜົນທີ່ຜູ້ທີ່ເຊື່ອທັງຫລາຍບໍ່ຄວນຄົບສະມາຄົມກັບປະເພດຂອງຄຣິສຕະຈັກທີ່ໂປໂລເວົ້າມານັ້ນເຂົາເຈົ້າຕ້ອງການຄຳປະກາດຢືນຢັນ ບໍ່ແມ່ນການຕັດສິນ, ເພື່ອນຳມາໃຊ້ໃນການປ່ຽນແປງໃຫ້ເປັນຜູ້ທີ່ເຊື່ອຢ່າງມີສິນທັມ.
- ການຈັດການກັບເຣື່ອງການເຮັດຜິດສິນທັມເພື່ອໃຫ້ມັນສືບໄປດ້ວຍດີນັ້ນຄຣິສຕະຈັກພວກເຮົາຄວນຈະເຮັດວິທີໃດ?ການລົງໂທດສະມາຊິກໃນຄຣິສຕະຈັກໃຫ້ຈົບສິ້ນໄປນັ້ນຈະຕ້ອງເຮັດຢ່າງໃດ? ແມ່ນຫຍັງທີ່ຕ້ອງເອົາຕາມແບບຢ່າງທີ່ໂປໂລໄດ້ບອກໄວ້? ແລ້ວມັນຈະມີຫຍັງເກີດຂຶ້ນ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ໂກຣິນໂທ 5:9-13)

1. ຖ້າທ່ານເປັນຜູ້ນຶ່ງໃນຈຳນວນບັນດາຜູ້ທີ່ເຊື່ອໃນເມືອງໂກຣິນໂທຊຶ່ງໄດ້ຍິນການອ່ານຈົດໝາຍສະບັບນີ້, ທ່ານ

ຈະມີຄວາມຮູ້ສຶກແນວໃດ ຖ້າທ່ານເປັນຜູ້ນຶ່ງທີ່ໂປໂລບອກວ່າ ສົມຄວນອອກໜີໄປໃຫ້ໄກ? ພວກເຮົາຕ້ອງເຮັດແນວໃດເພື່ອຈະປົກປ້ອງບໍ່ໃຫ້ເຮົາມີຄວາມຮູ້ສຶກແນວນັ້ນ?

2. ຄວາມແຕກຕ່າງຣະຫວ່າງສະມາຊິກຜູ້ທີ່ດໍາຣົງຢູ່ໃນຄວາມຊົ່ວອະທັມ ແລະຜູ້ທີ່ຕົກຢູ່ໃນຄວາມບໍ່ມີສິນທັມ?
3. ຄຣິສຕະຈັກຄວນຈະເຮັດແນວໃດຕໍ່ຄົນເຫລົ່ານີ້?
4. ເປັນຫຍັງພວກເຮົາຈຶ່ງໃຫ້ອະພັຍຫລາຍກວ່າການລົງໂທດສະມາຊິກຂອງຄຣິສຕະຈັກທີ່ບໍ່ມີສິນທັມ?
5. ເປັນຫຍັງພວກເຮົາຈຶ່ງລົງໂທດ? ເຮັດແນວໃດພວກເຮົາຈຶ່ງຈະມີພລັງເໜືອສັງຄົມ ແທນການຕິດຕາມການຊັກຈູງດ້ວຍພລັງຂອງສັງຄົມ?

## 3 . <u>ອັນໃດແມ່ນສິ່ງທີ່ຜິດກັບຄວາມພັນສັມພັນທາງເພດ?:</u> (1 ໂກຣິນໂທ 6:15-20)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 6:15-20
- ການເບິ່ງການສະແດງລາມົກຊຶ່ງບໍ່ເປັນການດຶງດູດຄວາມສົນໃຈທາງເພດອັນແທ້ຈິງໂອເຄຢູ່ບໍ່?
- ຄວາມບໍ່ມີສິນທັມເປັການກະເຮັດທາງຝ່າຍຮ່າງກາຍແນວໃດແດ່?
- ຄຣິສຕຽນໄດ້ສັນຍາວ່າຢ່າງໃດ ຄືຈະບໍ່ເຮັດການຊົ່ວ ບໍ່ເຮັດໃຫ້ເສື່ອມເສັຽ, ໃນເມື່ອເຂົາເຈົ້າເຮັດຜິດທາງເພດພັນສັມພັນແລ້ວຈະເປັນຢ່າງໃດ?

### <u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> 1 ໂກຣິນໂທ 6:15-20

1. ທ່ານໂປໂລໄດ້ໃຫ້ເຫດຜົນການຕໍ່ຕ້ານການມີເພດພັນສັມພັນທີ່ຜິດໄວ້ວ່າຢ່າງໃດແດ່?
2. ທ່ານໂປໂລໄດ້ເຮັດໃຫ້ເຂົາມີຄວາມຕົກໃຈໃນການເຮັດຜິດບາບຂອງເຂົາເຈົ້າແນວໃດ?
3. ທ່ານໂປໂລໄດ້ຖາມຄໍາຖາມທີ່ໜ້າຕົກໃຈໃຫ້ຄຣິສຕຽນໃນສັຕວັດທີ 21 ນັ້ນຢ່າງໃດ?
4. ເປັນຫຍັງທ່ານໂປໂລຈຶ່ງບອກພວກເຮົາໃຫ້ຫລີກໜີຈາກການຕໍ່ສູ້ການທົດລອງທາງເພດພັນສັມພັນ?
5. ພວກເຮົາຈະພ່າຍໜີໄດ້ຢ່າງໃດ?
6. ພວກເຮົາຈະຖວາຍກຽດແດ່ພຣະເຈົ້າດ້ວຍຮ່າງກາຍຂອງພວກເຮົາຢ່າງໃດ?
7. ພວກເຮົາຈະຖວາຍກຽດແດ່ພຣະເຈົ້າໃນຄຣິສຕະຈັກຂອງພວກເຮົາແນວໃດ?

### <u>ພຣະຄັມພີແຫ່ງຄວາມຈິງ</u>

- ຄຣິສຕະຈັກບໍ່ຄວນໃຫ້ອະພັຍ ຫລືມອງຂ້າມຄວາມຜິດທາງເພດພັນສັມພັນ.
- ຄຣິສຕະຈັກບໍ່ຄວນລະເລີຍຕໍ່ຄວາມຜິດທາງເພດດ້ວຍວ່າຜູ້ທີ່ເຊື່ອນັ້ນເປັນຄະນະຜູ້ບໍ່ຣະບັດຄຣິສຕະຈັກ.
- ຄຣິສຕະຈັກຄວນປະເຊີນໜ້າກັບການກະເຮັດຜິດທາງເພດພັນສັມພັນຂອງສະມາຊິກ ແລະປະຕິເສດໃນການຄົບຫາກັບເຂົາເຈົ້າ ຖ້າຫາກເຂົາບໍ່ຍອມສາຣະພາບ.
- ຄຣິສຕຽນຄວນສແວງຫາການປົວແປງຮ່າງກາຍໂດຍຄໍານຶງວ່າຮ່າງກາຍເປັນພຣະວິຫານຂອງພຣະວິນຍານບໍຣິສຸດ ແລະນໍາມາໃຫ້ເປັນທີ່ຖວາຍກຽດແດ່ພຣະເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** www.lsbf.org by JH